ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຳນັກງານ ຄຄຊ
ເລກທີ 547
ວັນທີ 26 MAY 2015
ໂທລະສັບ 021 217770

ເລກທີ: 20 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 26 MAY 2015

ລາຍງານການເຄື່ອນໄຫວປະຈຳອາທິດ
ທີ 11/05/2015 ຫາ 15/05/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ບາງສະກຸນເງິນໃນພາກພື້ນອາຊີແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນໂດລາສະຫະລັດ.

| ສະກຸນເງິນກີບທຽບກັບໂດລາ | ອາທິດຜ່ານມາ 05/05/2015 | ອາທິດນີ້ 12/05/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ (–) |
|---|---|---|---|
| ເອີໂຣ/ ໂດລາ | 1,1120 | 1,1196 | -0,68% |
| ໂດລາ/ເຢນ | 120,15 | 120,07 | 0,07% |
| ໂດລາ/ບາດ | 33,35 | 33,78 | -1,29% |
| ໂດລາ/ເປໂຊ | 44,61 | 44,79 | -0,41% |
| ໂດລາ/ຣູເປັຍ | 13.014,67 | 13.190,22 | -1,33% |
| ໂດລາ/ໂດລາສິງກະໂປ | 1,3351 | 1,3373 | -0,17% |
| ໂດລາ/ຢວນ | 6,2066 | 6,2086 | -0,03% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 0,79% ຈາກ 58,94 ໂດລາ/ບາເຣວ ມາເປັນ 59,41 ໂດລາ/ບາເຣວ ແລະ ລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,27% ຈາກ 1.187,70 ໂດລາ/ອອນ ມາເປັນ 1.184,44 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,07% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,05% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດ ແຂງຄ່າຂຶ້ນ 0,92% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 1,06% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,26% ສຳລັບອັດຕາ ທທກ ແຕ່ແຂງຄ່າຂຶ້ນ 0,13% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 1,33% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 1,88% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 05/04/2015 | | | ອາທິດນີ້ 12/05/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.074,04 | 8.104,75 | 8.093,56 | 8.079,95 | 8.109,43 | 8.099,40 | -0,07% | -0,06% | -0,07% |
| ບາດ | 245,76 | 246,95 | 246,78 | 243,76 | 244,93 | 244,52 | 0,82% | 0,82% | 0,92% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.084,32 | 8.107,87 | 8.096,09 | 8.086,92 | 8.113,93 | 8.100,43 | -0,03% | -0,07% | -0,05% |
| ບາດ | 249,13 | 250,03 | 249,58 | 246,30 | 247,63 | 246,96 | 1,15% | 0,97% | 1,06% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,13% | 0,04% | 0,03% | 0,09% | 0,06% | 0,01% | | | |
| ບາດ | 1,37% | 1,25% | 1,13% | 1,04% | 1,10% | 1,00% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 2,99% ທຽບໃສ່ວັນທີ 08/05/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 33,20%,
- ປະລິມານເງິນ M2 ເພີ່ມຂຶ້ນ 1,59% ເມື່ອທຽບໃສ່ວັນທີ 08/05/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 23,72%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 11/05/2015) ເຫັນວ່າ ທທກ ຂາຍໂດລາສຸດທິ 3,70 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 49,65 ລ້ານໂດລາ ແລະ ຂາຍໂດລາໄດ້ 53,35 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 1.153,24 ລ້ານບາດ (ໃນນີ້ ຊື້ບາດໄດ້ 394,57 ລ້ານບາດ ແລະ ຂາຍບາດໄດ້ 1.547,81 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 40,11% ແຕ່ເພີ່ມຂຶ້ນ 43,70% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 11,21 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 296,72 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 13,62 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 1.018,95 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 0,67 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈຳນວນ 1.190,46 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 05/05/2015 | | ອາທິດທີ 11/05/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 70,33 | 143,14 | 16,81 | 189,35 | -76,10% | 32,28% |
| - ທ/ຄທຸລະກິດອື່ນໆ | 28,04 | 110,82 | 32,84 | 205,22 | 17,14% | 85,19% |
| ລວມຊື້: | **98,37** | **253,95** | **49,65** | **394,57** | **-49,53%** | **55,37%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 56,93 | 185,84 | 20,76 | 430,07 | -63,53% | 131,42% |
| - ທ/ຄທຸລະກິດອື່ນໆ | 16,70 | 911,93 | 32,59 | 1.117,74 | 95,19% | 22,57% |
| ລວມຂາຍ: | **73,63** | **1.097,77** | **53,35** | **1.547,81** | **-27,54%** | **41,00%** |
| ຊື້-ຂາຍສຸດທິ ທທກ | **24,74** | **-843,81** | **-3,70** | **-1.153,24** | **-114,97%** | **36,67%** |
| ຜົດຕ່າງ ຊື້-ຂາຍ | 25,15 | -332,27 | -7,46 | -292,28 | -326,76% | 399,34% |
| ມູນຄ່າການຊື້-ຂາຍ | **172,00** | **1.351,72** | **103,00** | **1.942,38** | **-40,11%** | **43,70%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 8,00 | 19,00 | 0,00 | 37,05 | | |
| - ທຫລ ຂາຍໃຫ້ ທທກ | 13,08 | 425,00 | 13,62 | 1.056,00 | | |
| ຊື້-ຂາຍສຸດທິ ທຫລ | **-5,08** | **-406,00** | **-13,62** | **-1.018,95** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **9,70** | **344,77** | **11,21** | **296,72** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,01 | 783,40 | 35,75 | 1.208,55 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 23,93 | 0,00 | 35,08 | 18,09 | | |
| ຊື້-ຂາຍສຸດທິ ທຫລ | **-23,92** | **783,40** | **0,67** | **1.190,46** | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 05/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 0,84% ຫຼຸດລົງ 0,11% ຈາກ 0,95% ໃນເດືອນ 04/2015.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 102,2 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 138,3 ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊໍາລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊໍາລະສະສາງຂອງ ທຫລ ໃນອາທິດນີ້ ຈໍານວນ 848 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 25,44% ລວມຈໍານວນເງິນທີ່ໂອນຜ່ານທັງໝົດ 546,40 ຕື້ກີບ ເພີ່ມຂຶ້ນ 48,76% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) (08-14/05/2015) ມີຈໍານວນ 1.589 ຄັ້ງ ໂດຍມີມູນຄ່າ 900,08 ຕື້ກີບ ເພີ່ມຂຶ້ນ 88,36% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 448 ຄັ້ງ.

### 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.452,37 ຈຸດ ຫຼຸດລົງ 0,38% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 540.868 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3.66 ຕື້ກີບ ເພີ່ມຂຶ້ນ 99,09% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 72,16% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.349 ກີບ/ຮຸ້ນ ຫຼຸດລົງ 288 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 212.994 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,35 ຕື້ກີບ ເພີ່ມຂຶ້ນ 125,72% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 55,19% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,68%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.439 ກີບ/ຮຸ້ນ ເພີ່ມຂຶ້ນ 47 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 292,421 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,17 ຕື້ກີບ ເພີ່ມຂຶ້ນ 87,70% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 76,27% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,30%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.300 ກີບ/ຮຸ້ນ, ໂດຍໃນອາທິດນີ້ມີການຊື້-ຂາຍພຽງວັນດຽວ. ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,83 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.764 ກີບ/ຮຸ້ນ ຫຼຸດລົງ 35 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 35.353 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 133,09 ລ້ານກີບ ເພີ່ມຂຶ້ນ 272,94% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 22% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,72%[5].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສໍາເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມເຈລະຈາສັນຍາການຄ້າຊາຍແດນ ລາວ-ຫວຽດນາມ-ກໍາປູເຈຍ, ທີ່ປະເທດກໍາປູເຈຍ, ❷ ກອງປະຊຸມໂຕະມົນການຮ່ວມມືຂອງອົງການຮ່ວມມື ແລະ ພັດທະນາເສດຖະກິດ OECD-AMRO-ADB ຄັ້ງທີ IV ທີ່ປະເທດຍີ່ປຸ່ນ, ❸ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງດໍາລັດວ່າດ້ວຍການປົກປ້ອງຜູ້ຝາກເງິນ ໂດຍສະເພາະແມ່ນບັນຫາທີ່ຕິດພັນກັບປະກັນໄພ ແລະ ວຽກງານຫຼັກຊັບ ທີ່ ທຫລ;
- ສໍາເລັດການເຂົ້າຮ່ວມສໍາມະນາ: ❶ ສໍາມະນາກັບທະນາຄານກາງເຢຍລະມັນ ໃນຫົວຂໍ້ “Reserve Management”, ❷ ສໍາມະນາ ໃນຫົວຂໍ້ “ພາບລວມການເປັນປະທານອາຊຽນຂອງ ສປປ ລາວ ໃນປີ 2016 ທີ່ໂຮງແຮມແລນມາກ;

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສຳເລັດການຈັດສຳມະນາ ໃນຫົວຂໍ້: "ການຮັກສາສຸຂະພາບໄວຈະເລີນພັນ" ເພື່ອໃຫ້ພະນັກງານ ທຫລ, ທະນາຄານທຸລະກິດລັດ ແລະ ຕາງໜ້າກະຊວງຈຳນວນໜຶ່ງ ໄດ້ຮັບຮູ້ເຖິງຄວາມໝາຍ ແລະ ຄວາມສຳຄັນຂອງການຮັກສາສຸຂະພາບ ທີ່ສະຖາບັນການທະນາຄານ.

## III. ***ແຜນວຽກຈຸດສຸມອາທິດຕໍ່ໄປ:***

- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2,000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2 ແລະ ບົດຮຽນຂອງບັນດາປະເທດທີ່ຈັດຕັ້ງປະຕິບັດການຄຸ້ມຄອງທະນາຄານ ຕາມຫຼັກການ ບາເຊວ 2, ❷ ຄົ້ນຄວ້າຮ່າງລະບຽບກ່ຽວກັບການຢຶດ, ອາຍັດທຶນຂອງຜູ້ກໍ່ການຮ້າຍ ແລະ ການຟອກເງິນ ເພື່ອຜັນຂະຫຍາຍ ມາດຕາ 38,39 ແລະ 40 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ ຄົ້ນຄວ້າລະບຽບກ່ຽວກັບການປັບໄໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
- ສືບຕໍ່ຈັດຕັ້ງປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ກະກຽມຈັດກອງປະຊຸມກວດກາທະນາຄານ ປະຈຳປີ 2014 ທີ່ສະຖາບັນການທະນາຄານ;
- ກະກຽມເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມ ໃນຫົວຂໍ້: "ການຮ່ວມມືທາງດ້ານການເງິນ ແລະ ການບໍລິຫານຄວາມສ່ຽງ" ທີ່ນະຄອນຫຼວງປັກກິ່ງ ປະເທດ ສປ. ຈີນ ແລະ ❷ ກອງປະຊຸມວຽກງານຊຳລະສະສາງສູນ SEACEN ຄັ້ງທີ 14 ທີ່ປະເທດອິນເດຍ.

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ພາສີ ພິມມະກອນ